ໂຄງການເຄືອຂ່າຍຂໍ້ມູນທີ່ດິນ
ແລະ ຊັບພະຍາກອນທຳມະຊາດ

Rights-LINK

# ຂໍ້ຂັດແຍ່ງໃນການສືບທອດ ແລະ ແບ່ງປັນມູນມໍລະດົກ

ຂຽນໂດຍ: ບຸນສົງ ບຸບຜາ

*ເພີ່ມທະວີການນຳໃຊ້ ແລະ ຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ ຢູ່ໃນ ສປປ ລາວ ໃຫ້ຍືນຍົງໂດຍການສົ່ງເສີມການເຂົ້າເຖິງຂໍ້ມູນຂ່າວສານ, ສົ່ງເສີມການມີສ່ວນຮ່ວມ ແລະ ຍົກລະດັບຄວາມສາມາດໃຫ້ແກ່ຄູ່ຮ່ວມງານ.*

http://www.rightslinklao.org

ທີ່ດິນ LANDS

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

**Swiss Agency for Development and Cooperation SDC**

VILLAGE FOCUS INTERNATIONAL

ໂຄງການ ເຄືອຂ່າຍຂໍ້ມູນ ທີ່ດິນ

# Rights-LINK

ບ້ານ ໂພນສະຫວັນໃຕ້, ໜ່ວຍ 14, ເຮືອນເລກທີ 207

ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ

ໂທ: +856 (0)21 312519

ແຟກ: +856 (0)21 315841

ອົງການບ້ານຈຸດສຸມສາກົນ (VFI)

ອົງການຄຸ້ມຄອງທີ່ດິນແຫ່ງຊາດ (NLMA)

ສະໜັບສະໜູນທຶນໂດຍ:

ອົງການເພື່ອການພັດທະນາ ແລະ ການຮ່ວມມື ແຫ່ງປະເທດສະວິດເຊີແລນ (SDC)

# ບົດນຳ

ໃນການດຳລົງຊີວິດຂອງຄົນເຮົາແມ່ນປະກອບດ້ວຍປັດໃຈສຳຄັນຫລາຍໆຢ່າງ, ຊັບສິນເງິນຄຳກໍແມ່ນປັດ ໃຈໜຶ່ງທີ່ມີຄວາມໝາຍສຳຄັນຕໍ່ການດຳລົງຊີວິດຂອງມະນຸດເຮົາ, ເນື່ອງຈາກມັນມີບົດບາດສຳຄັນໃນການສ້າງ ເງື່ອນໄຂໃຫ້ຄົນເຮົາສາມາດສ້າງ ຫລືກຳນົດພື້ນຖານຊີວິດການເປັນຢູ່ຂອງຄົນເຮົາ. ຄົນຜູ້ໜຶ່ງຖ້າຫາກມີຊັບ ສິນເງິນ ຄຳເປັນຈຳນວນຫລາຍກໍ່ຈະມີໂອກາດສ້າງພື້ນຖານ ແລະ ເງື່ອນໄຂທີ່ດີໃຫ້ແກ່ການດຳລົງຊີວິດຂອງຕົນ ໝາຍວ່າຈະມີກຳລັງແຮງພຽງພໍທີ່ຈະສ້າງປັດໃຈສຳຄັນອື່ນໆອີກຫລາຍຢ່າງໃຫ້ແກ່ຕົນເອງ ເພື່ອເຮັດໃຫ້ຊີ ວິດຂອງຕົນມີຄວາມສະດວກທາງດ້ານວັດຖຸຫລາຍຂຶ້ນ, ເພື່ອບັນລຸເປົ້າໝາຍແຫ່ງຊີວິດ. ດັ່ງນັ້ນ, ການມີຊັບສິນເງິນຄຳຖື ໄດ້ວ່າເປັນສິ່ງສຳຄັນ ແລະ ມີປະໂຫຍດແກ່ຄົນເຮົາ. ແຕ່ການຈະໄດ້ຊັບສິນວັດຖຸເງິນຄຳອັນມີຄ່າເຫຼົ່ານັ້ນ ກໍ່ຕ້ອງຢູ່ບົນພື້ນຖານຄວາມຖືກຕ້ອງສຸດຈະຫລິດ ແລະ ຍຸຕິທຳ, ບໍ່ແມ່ນໄດ້ມາຍ້ອນການຫລັກໂລບ ຫລືສວຍ ໃຊ້ທຸກວິທີທາງທີ່ບໍ່ຖືກຕ້ອງເພື່ອເອົາຂອງເພິ່ນມາເປັນຂອງຕົນ ເພາະການເຫດຜົນແບບນັ້ນມັນຈະສົ່ງຜົນສະ ທ້ອນດ້ານລົບຕໍ່ສາຍພົວພັນ ບໍ່ວ່າຈະເປັນລະຫວ່າງຄົນສອງຄົນ ຫລືຫລາຍຄົນ ເຮັດໃຫ້ເກີດມີຂໍ້ຂັດແຍ່ງເພື່ອ ຍາດຊີງຜົນປະໂຫຍດກັນ, ກໍ່ໃຫ້ມີປະກົດການຫຍໍ້ທໍ້ໃນສັງຄົມ ເຮັດໃຫ້ມີການເຄື່ອນໄຫວ ຫລືການກະທຳທີ່ບໍ່ ສອດຄ່ອງກັບແນວທາງ ແລະ ລະບຽບກົດໝາຍຂອງບ້ານເມືອງ. ເພາະຊັບສິນຂອງໃຜຜູ້ນັ້ນກໍຕ້ອງການຢາກ ຄອບຄອງເປັນເຈົ້າຂອງ. ເພື່ອຮັບປະກັນໃຫ້ສາຍພົວພັນສັງຄົມມີຄວາມສະຫງົບສຸກຈາກການໄດ້ຮັບປັດໃຈດ້ານ ຊັບສິນວັດຖຸເງິນຄຳນັ້ນ ຄົນເຮົາຕ້ອງມີຄຸນນະທຳ, ເຮັດໃຈໃຫ້ຮູ້ຈັກຍອມຮັບ ແລະ ພູມໃຈໃນສິ່ງທີ່ຕົນເອງມີຄ້າຍ ຄືຄຳສຸພາສິດທີ່ວ່າ “ສິບກີບຢູ່ຟາກນ້ຳຢ່າອ່າວຄະນຶງຫາ ສອງກີບມານີ້ໃຫ້ຮີບກຳເອົາໄວ້”.

ຈຸດປະສົງຂອງກໍລະນີສຶກສາບົດນີ້ ແມ່ນຕ້ອງການໃຫ້ຜູ້ອ່ານສາມາດຖອດຖອນບົດຮຽນກ່ຽວກັບບາງບັນຫາຂໍ້ຂັດແຍ່ງທີ່ໄດ້ຍົກຂຶ້ນຢູ່ໃນກໍລະນີສຶກສານີ້ ເຊິ່ງມັນແມ່ນຂໍຂັດແຍ່ງກ່ຽວກັບທີ່ດິນໃນການການສືບທອດແລະການແບ່ງປັນມູນມໍລະດົກຂອງຍາດພີ່ນ້ອງປ້ອງປາຍ ຊຶ່ງມັນໄດ້ສ້າງຜົນກະທົບດ້ານລົບຕໍ່ສາຍພົວພັນຍາດ ພີ່ນ້ອງຂອງຄູ່ກໍລະນີແລະການສູນເສັຍຜົນປະໂຫຍດອັນໃຫຍ່ຫລວງຂອງຄອບຄົວ. ເນື່ອງຈາກວ່າຝ່າຍໜຶ່ງມີຈຸດປະສົງຂໍແບ່ງ ປັນທີ່ດິນ ຊຶ່ງແມ່ນມູນມໍລະດົກທີ່ຕົກທອດມາຈາກພໍ່ແມ່ເພື່ອຄອບຄອງຕາມພູດທີ່ຕົນຄວນໄດ້ຮັບ, ແຕ່ວ່າອີກຝ່າຍໜຶ່ງ ພັດບໍ່ຍິນຍອມທີ່ຈະແບ່ງປັນໃຫ້ ແລະ ຕ້ອງການຄອບຄອງແຕ່ພຽງຜູ້ດຽວ ຊຶ່ງໄດ້ເປັນສາເຫດນຳໄປສູ່ການເກີດຂໍ້ຂັດແຍ່ງລະຫວ່າງຍາດພີ່ນ້ອງ ເຮັດໃຫ້ສາຍພົວພັນມິດຕະພາບຂອງຄອບ ຄົວຕ້ອງຖືກຕັດຂາດຈາກກັນໂດຍສິ້ນເຊີງ ກັບກາຍເປັນສັດຕູ. ເຊິ່ງຄວາມເປັນມາຂອງເຫດການໄດ້ອະທິບາຍໄວ້ໃນຫົວຂໍ້ຕໍ່ໄປນີ້.

# ສາລະບານ


| | |
|---|---|
| ບົດນຳ | I |
| ສາລະບານ | III |
| ຄວາມເປັນມາ. | 1 |
| ບັນຫາທີ່ເກີດຂຶ້ນ. | 2 |
| ກົດໝາຍທີ່ຖືກນຳໃຊ້ເຂົ້າໃນການແກ້ໄຂຂໍ້ຂັດແຍ່ງໃນການແບ່ງປັນມູນມໍລະດົກດັ່ງກ່າວ. | 3 |
| ການແກ້ໄຂບັນຫາ ທາງຂະບວນການຍຸຕິທຳ. | 3 |
| ການວິເຄາະບັນຫາ. | 5 |
| ສະຫລຸບ. | 5 |
| ຄຳແນະນຳ, ຂໍ້ສະເໜີ. | 5 |
| ຄຳຖາມ. | 6 |
| ຂໍ້ມູນອ້າງອີງ. | 7 |

# 1. ຄວາມເປັນມາຂອງຜູ້ມີສ່ວນຮ່ວມໃນຂໍ້ຂັດແຍ່ງ

ມີທີ່ດິນຕອນໜຶ່ງມີເນື້ອທີ່ 950 ຕາແມັດ. ຕັ້ງຢູ່ບ້ານ ວັດ, ເມືອງຈັນທະບູລີ, ນະຄອນຫລວງວຽງຈັນ.[1] ເດີມທີ່ດິນຕອນດັ່ງກ່າວແມ່ນເປັນຂອງແມ່ຕູ້ ສົມພອນ (ນາມສົມມຸດ) (ເສຍຊີວິດ) ໄດ້ຮັບສິດນຳໃຊ້ທີ່ດິນຖືກຕ້ອງຕາມລະບຽບກົດໝາຍຊຶ່ງໃນສະໄໝຍັງມີຊີວິດໄດ້ມອບສິດນຳໃຊ້ທີ່ດິນຕອນດັ່ງກ່າວໃຫ້ລູກສາວ ແລະ ລູກເຂີຍ ຊື່ ນາງ ສົມໝາຍ ແລະ ທ້າວ ຄຳດີ (ຜົວເມຍ) (ນາມສົມມຸດ) ຊຶ່ງທັງສອງຜົວເມຍກໍໄດ້ນຳໃຊ້, ຄຸ້ມຄອງ ແລະ ປົກປັກຮັກສາທີ່ດິນຕອນດັ່ງກ່າວຕະຫລອດ. ນາງ ສົມໝາຍ ແລະ ທ້າວ ຄຳດີ (ຜົວເມັຍ) ຄູ່ນີ້ ໄດ້ມີລູກນຳກັນ 3 ຄົນຄື ນາງ ວຽງໃໝ່ (ນາມສົມມຸດ), ທ້າວ ວຽງຄຳ (ນາມສົມມຸດ) ແລະ ທ້າວ ວຽງແກ້ວ (ນາມສົມມຸດ) ຊຶ່ງທັງ ຫ້າ ພໍ່ແມ່ລູກ ກໍມີຄວາມຮັກແພງສາມັກຄີ ແລະ ດຳລົງຊີວິດຢ່າງຜາສຸກ. ມາຮອດໄລຍະໜຶ່ງ ນາງ ສົມໝາຍ ແລະ ທ້າວ ຄຳດີ ຜູ້ເປັນດັ່ງຕົ້ນໄມ້ໃຫຍ່ທີ່ໃຫ້ຄວາມອົບອຸ່ນຮົ່ມເຢັນ ແລະ ເປັນເສົາຄ້ຳໃຫ້ແກ່ຄອບຄົວກໍໄດ້ເສຍຊີວິດລົງ. ມີພຽງແຕ່ຊັບສົມບັດຊຶ່ງແມ່ນທີ່ດິນຕອນດັ່ງກ່າວ ແລະ ສັງຫາລິມະຊັບຈຳນວນໜຶ່ງທີ່ສອງຜົວເມັຍຫາມາໄດ້ໃນຄາວຍັງມີຊີວິດທີ່ເຫຼືອໄວ້ໃຫ້ລູກທັງ ສາມ ຄົນໄດ້ສືບທອດ.

ແຕ່ຍ້ອນຄວາມອົບອຸ່ນຜາສຸກທີ່ເຄີຍໄດ້ຮັບຈາກພໍ່ແມ່.ເຖິງວ່າຜູ້ເປັນບິດາມານດາຈະໄດ້ຈາກໄປແລ້ວກໍຕາມ, ລູກທັງສາມຄົນກໍ່ບໍ່ມີຄວາມຂັດແຍ່ງຜິດຖຽງກັນ. ສະນັ້ນ, ທັງສາມຄົນ ຈຶ່ງບໍ່ໄດ້ມີການແບ່ງປັນມູນມໍ ລະດົກທີ່ໄດ້ຮັບຕົກທອດມາຈາກພໍ່ແມ່, ແລະ ຕ່າງຄົນຕ່າງກໍດຳລົງຊີວິດດ້ວຍຄວາມສະຫງົບສຸກ. ໃນນີ້, ນາງ ວຽງໃໝ່ ຜູ້ເປັນເອື້ອຍກົກໄດ້ມາປຸກເຮືອນທີ່ມີລັກຊະນະແບບບູຮານຂຶ້ນ 01 ຫລັງ ແລະ ກໍດຳລົງຊີວິດຢູ່ທີ່ດິນຕອນດັ່ງກ່າວມາໄດ້ໄລຍະໜຶ່ງ.

ພໍຕົກມາຮອດປີ 1976 ນາງ ວຽງໃໝ່ ໄດ້ເດີນທາງໄປຕ່າງປະເທດ ຍັງເຫຼືອແຕ່ ທ້າວ ວຽງຄຳ ແລະ ທ້າວ ວຽງແກ້ວ ພ້ອມຄອບຄົວຂອງພວກເຂົາກໍຍັງອາໄສ ແລະ ດຳລົງຊີວິດທຳມາຫາກິນ ຢູ່ ສປປ ລາວ.

ມາເຖິງໄລຍະໜຶ່ງ ທ້າວ ວຽງແກ້ວ ໄດ້ພາລູກເມຍຂອງຕົນເຂົ້າມາອາໄສຢູ່ທີ່ດິນຕອນດັ່ງກ່າວ ແລະ ໄດ້ທຳການສ້ອມແປງເຮືອນບູຮານຢູ່ທີ່ດິນມູນມໍລະດົກຕອນດັ່ງກ່າວ ແລະ ປຸກເຮືອນໃໝ່ຂຶ້ນອີກ 01 ຫລັງ.

ສ່ວນທາງດ້ານ ທ້າວ ວຽງຄຳ ແມ່ນໄດ້ໄປອາໄສ ແລະ ເຮັດນາຢູ່ດິນມູນຂອງເມຍ ທີ່ ບ້ານ ບໍ່, ເມືອງຈັນທະບູລີ, ນະຄອນຫລວງວຽງຈັນ, ແຕ່ຕໍ່ມາກໍໄດ້ປຸກເຮືອນໃຫ້ລູກຊາຍ ຊື່ ທ້າວ ພອນປະເສີດ ແລະ ລູກໃພ້ຊື່ ນາງ ສຳລານ 01 ຫລັງ. ຢູ່ຂ້າງເຮືອນບູຮານໃນທີ່ດິນຕອນດັ່ງກ່າວ. ຊຶ່ງສາຍພົວພັນຄອບຄົວລະຫວ່າງສອງ ນ້ອງອ້າຍກໍຍັງດຳເນີນໄປດ້ວຍດີ.

ໃນປີ 1983 ລັດໄດ້ທຳການກວດກາສຳຫລວດດິນ ແລະ ເຮືອນຄົນໂຕນໂດຍໄດ້ອອກແຈ້ງການໃຫ້ປະ ຊາຊົນທີ່ມີດິນ ແລະ ເຮືອນໃຫ້ມາແຈ້ງກຳມະສິດທີ່ ດິນ ແລະ ເຮືອນ ເຊິ່ງ ທ້າວ ວຽງຄຳ ແລະ ທ້າວ ວຽງແກ້ວ ກໍໄດ້ໄປແຈ້ງ ຕາມໃບແຈ້ງເລກທີ ..... ລົງວັນທີ 2 ກໍລະກົດ 1983 ໂດຍແມ່ນ ທ້າວ ວຽງຄຳ ເປັນຜູ້ເກັບຮັກສາເອກະສານດັ່ງກ່າວໄວ້.

ໃນປີ 1991 ພາຍຫລັງທີ່ທາງການໄດ້ປະກາດໃຫ້ຜູ້ທີ່ມີທີ່ດິນມາແຈ້ງສິດກ່ຽວກັບທີ່ດິນທັງສອງ ນ້ອງອ້າຍກໍໄດ້ໄປແຈ້ງຕາມລະບຽບການ ໂດຍບໍ່ໄດ້ປ່ຽນມາໃສ່ຊື່ຂອງພວກຕົນແຕ່ຢ່າງໃດ.

ມາຮອດປີ 1995 ທ້າວ ວຽງແກ້ວ ໄດ້ເດີນທາງໄປຕ່າງປະເທດ ໂດຍໄດ້ຢືມເອກະສານແຈ້ງກຳມະສິດທີ່ດິນ

1 ແມ່ນເນື້ອທີ່ ແລະ ສະຖານທີ່ທີ່ຜູ້ຂຽນສົມມຸດຂຶ້ນ

ແລະ ເຮືອນ ຈາກ ທ້າວ ວຽງຄໍາ ຜູ້ເປັນອ້າຍ ເພື່ອໄປຄໍ້າປະກັນສໍາລັບການເດີນທາງໄປຕ່າງປະເທດ.

ພາຍຫລັງກັບຄືນມາຈາກຕ່າງປະເທດ ທ້າວ ວຽງແກ້ວ ກໍສືບຕໍ່ດໍາລົງຊີວິດຕາມປົກກະຕິ, ແຕ່ຍັງບໍ່ທັນ ໄດ້ສົ່ງເອກະສານແຈ້ງກໍາມະສິດທີ່ດິນ ແລະ ເຮືອນຄືນໃຫ້ ທ້າວ ວຽງຄໍາ ເພື່ອເກັບຮັກສາໄວ້ຕາມເດີມ.

ມາຮອດປີ 1999 ທ້າວ ວຽງແກ້ວ ກໍໄດ້ເສັຍຊີວິດ ແລະ ໃນທ້າຍປີ 2000 ນາງ ວຽງໃໝ່ ທີ່ອາໄສຢູ່ຕ່າງປະເທດ ກໍໄດ້ເສຍຊີວິດເຊັ່ນດຽວກັນ.

ພາຍຫລັງທີ່ ທ້າວ ວຽງແກ້ວ ໄດ້ເສຍຊີວິດ, ຕົກມາຮອດປີ 2002 ນາງ ອາລຸນ (ນາມສົມມຸດ) (ລູກສາວ ຂອງ ທ້າວ ວຽງແກ້ວ) ໄດ້ນໍາເອົາເອກະສານໃບແຈ້ງກໍາມະສິດທີ່ອອກໃນປີ 1983 ຊຶ່ງພວກຕົນຍັງບໍ່ໄດ້ສົ່ງຄືນໃຫ້ແກ່ ທ້າວ ວຽງຄໍາ ນັ້ນໄປແຈ້ງກໍາມະສິດທີ່ດິນ ແລະ ເຮືອນ. ເພື່ອອອກເປັນຊື່ຂອງຜູ້ກ່ຽວແຕ່ພຽງຜູ້ດຽວ ແລະ ຕ້ອງການໃຫ້ ທ້າວ ພອນປະເສີດ ແລະ ນາງ ສໍາລານ (ນາມສົມມຸດ) (ລູກຊາຍ ແລະ ລູກໃພ້ ຂອງ ທ້າວ ວຽງຄໍາ) ຍົກຍ້າຍອອກຈາກທີ່ດິນຕອນດັ່ງກ່າວ, ເນື່ອງຈາກວ່າ ຕົນ ແລະ ຄອບຄົວ ຕ້ອງການນໍາໃຊ້ແຕ່ພຽງຝ່າຍດຽວ.ເມື່ອເຫດການເປັນໄປຄືແບບນັ້ນ, ທ້າວ ວຽງຄໍາ ຈຶ່ງບໍ່ເຫັນດີ ແລະ ໄດ້ສະເໜີຂໍ ແບ່ງປັນທີ່ດິນຊຶ່ງເປັນມູນມໍລະດົກດັ່ງກ່າວ.ເພື່ອໃຫ້ ລູກຊາຍ ແລະ ລູກໃພ້ຂອງຕົນ ໄດ້ໃຊ້ເປັນບ່ອນຢູ່ອາໄສ ແລະ ທໍາມາຫາກິນລ້ຽງ ຊີບຄອບຄົວຂອງເຂົາເຈົ້າ.

## 2. ບັນຫາທີ່ເກີດຂຶ້ນ.

ດັ່ງທີ່ໄດ້ກ່າວໄວ້ໃນໃນຕອນທ້າຍຂອງຂໍ້ ທີ 2, ພາຍຫລັງທີ່ ທ້າວ ວຽງແກ້ວ ໄດ້ເສຍຊີວິດໃນປີ 1999 ແລະ ນາງ ວຽງໃໝ່ ໄດ້ເສຍຊີວິດໃນປີ 2000, ນາງ ອາລຸນ ( ລູກສາວຂອງທ້າວ ວຽງແກ້ວ) ໄດ້ໄປສະເໜີຂໍແຈ້ງກໍາມະສິດທີ່ດິນ ແລະ ເຮືອນ. ເພື່ອຂໍອອກຊື່ຂອງຜູ້ກ່ຽວພຽງຜູ້ດຽວ ແລະ ຕ້ອງການໃຫ້ລູກຊາຍ ແລະ ລູກໄພ້ຂອງ ທ້າວ ວຽງຄໍາ ຍົກຍ້າຍອອກຈາກທີ່ດິນມູນມໍລະດົກຕອນດັ່ງກ່າວ ຊຶ່ງເປັນສາເຫດເຮັດໃຫ້ ທ້າວ ວຽງຄໍາ ບໍ່ເຫັນດີ ແລະ ບໍ່ພໍໃຈຕໍ່ການກະທໍາດັ່ງກ່າວ. ເນື່ອງຈາກຜູ້ກ່ຽວເຫັນວ່າ ທີ່ດິນຕອນດັ່ງກ່າວຍັງເປັນມູນມໍລະດົກຂອງ ທ້າວ ຄໍາດີ ແລະ ນາງ ສົມໝາຍ ຜູ້ເປັນພໍ່ແມ່ຂອງຕົນ ຊຶ່ງຍັງບໍ່ທັນໄດ້ມີການແບ່ງປັນໃຫ້ບັນດາພວກລູກທີ່ມີສິດສືບທອດເທື່ອ ແລະ ອີງຕາມລະບຽບກົດໝາຍແລ້ວ ຕົນເຫັນວ່າມີສິດໄດ້ຮັບມູນມໍລະດົກດັ່ງກ່າວ. ບາງສ່ວນ ແລະ ການທີ່ ນາງ ອາລຸນ(ຜູ້ເປັນຫລານສາວ) ຈະໄປແຈ້ງກໍາມະສິດທີ່ດິນ ແລະ ເຮືອນອອກຊື່ ນາງ ອາລຸນ ພຽງແຕ່ຜູ້ດຽວນັ້ນແມ່ນບໍ່ຖືກຕ້ອງ. ສະນັ້ນ, ທ້າວ ວຽງຄໍາ ຈຶ່ງໄດ້ມີການສະເໜີຮ້ອງຂໍໃຫ້ມີການແບ່ງປັນມູນມໍລະດົກດັ່ງກ່າວ.

ໃນເມື່ອ ທ້າວ ວຽງຄໍາ ຂໍໃຫ້ ນາງ ອາລຸນ ແບ່ງປັນມູນມໍລະດົກຊຶ່ງແມ່ນທີ່ດິນຕອນດັ່ງກ່າວໃຫ້ຕົນ ບາງສ່ວນ ແລ້ວ, ແຕ່ ນາງ ອາລຸນ ບໍ່ຍອມທີ່ຈະແບ່ງປັນໃຫ້ ມັນຈຶ່ງກາຍເປັນຈຸດຂີດໝາຍທີ່ຂໍ້ຂັດແຍ່ງລະຫວ່າງທັງສອງ ຝ່າຍໄດ້ເລີ່ມຕົ້ນຂຶ້ນ.

ເບື້ອງຕົ້ນ, ໄດ້ມີການໄກ່ເກ່ຍສຶກສາອົບຮົມຂັ້ນບ້ານຈົນເຖິງຂັ້ນເມືອງ, ແຕ່ເຖິງວ່າ ເວລາຈະຜ່ານຫລາຍ ພຽງໃດກໍບໍ່ສາມາດທີ່ຈະຕົກລົງໄກ່ເກ່ຍປະນີປະນອມໃຫ້ຂໍ້ຂັດແຍ່ງສິ້ນສຸດໂດຍສັນຕິໄດ້. ເພາະທາງຝ່າຍ ທ້າວ ວຽງຄໍາ ແມ່ນຕ້ອງ ການຂໍແບ່ງປັນບາງສ່ວນຂອງທີ່ດິນຕອນດັ່ງກ່າວ, ເພື່ອໃຫ້ລູກຊາຍ ແລະ ລູກໃພ້ຂອງຕົນ ໄດ້ ມີບ່ອນຢູ່ອາໄສ. ແຕ່ທາງດ້ານ ນາງ ອາລຸນ ແມ່ນບໍ່ຕ້ອງການທີ່ຈະແບ່ງປັນໃຫ້ ຕ້ອງການເປັນເຈົ້າຂອງ ທີ່ດິນຕອນດັ່ງກ່າວ, ແຕ່ພຽງຝ່າຍດຽວ ເພາະເຫັນວ່າພາຍຫລັງທີ່ ນາງ ວຽງໃໝ່ ໄດ້ຍ້າຍອອກ

ໄປ ແລະ ເດີນທາງໄປອາໄສຢູ່ຕ່າງປະເທດ. ຄອບຄົວຂອງພວກຕົນກໍໄດ້ເຂົ້າມາຢູ່ອາໄສ ແລະ ຄຸ້ມຄອງພັດທະນາທີ່ດິນຕອນດັ່ງກ່າວ ຈຶ່ງບໍ່ຕ້ອງການແບ່ງປັນໃຫ້ແກ່ຜູ້ໃດ.

ຈາກຈຸດຢືນ ແລະ ທັດສະນະທີ່ສອງຝ່າຍດຳເນີນ ແລະ ມີຢູ່ນັ້ນ, ຍິ່ງເຮັດໃຫ້ລະດັບຂໍ້ຂັດແຍ່ງລະຫວ່າງ ທັງ ສອງຝ່າຍ (ຄອບຄົວຂອງ ນາງອາລຸນ ແລະ ຄອບຄົວຂອງ ທ້າວ ວຽງຄຳ) ຍິ່ງຂະຫຍາຍອອກຫລາຍຂຶ້ນຈົນນຳໄປສູ່ການຟ້ອງຮ້ອງກັນຂຶ້ນສານ.ເພື່ອຫວັງທີ່ຈະເຮັດໃຫ້ຂໍ້ຂັດແຍ່ງໄດ້ຖືກແກ້ໄຂດ້ວຍຂັ້ນຕອນຂອງຂະບວນ ການຍຸຕິທຳ ແລະ ລະບຽບກົດໝາຍຂອງບ້ານເມືອງ, ເພື່ອໃຫ້ໄດ້ມາເພື່ອຜົນປະໂຫຍດທີ່ຕົນຄວນຈະໄດ້ຮັບ ແລະ ຄວາມຍຸຕິທຳ.

ໂດຍຂໍ້ຂັດແຍ່ງດັ່ງກ່າວໄດ້ຖືກນຳຂຶ້ນພິຈາລະນາ ເລີ່ມຕັ້ງແຕ່ສານຂັ້ນຕົ້ນນະຄອນຫລວງ ໂດຍແມ່ນທ້າວ ວຽງຄຳ ເປັນຜູ້ຮ້ອງຟ້ອງຂໍແບ່ງປັນມູນມໍລະດົກທີ່ແມ່ນທີ່ດິນຕອນດັ່ງກ່າວ ຈາກ ນາງ ອາລຸນ.

ພາຍຫລັງການຕັດສິນຂອງສານຂັ້ນຕົ້ນນະຄອນຫລວງ ຝ່າຍ ນາງ ອາລຸນ ບໍ່ພໍໃຈຕໍ່ຄຳຕັດສິນ ຈຶ່ງໄດ້ຮ້ອງຂໍອຸທອນເຖິງ ສານອຸທອນພາກກາງ ແລະ ສຸດທ້າຍກໍ່ເຖິງການພິຈາລະນາຂອງສານປະຊາຊົນ ສູງສຸດ.

## 3. ກົດໝາຍທີ່ຖືກນຳໃຊ້ເຂົ້າໃນການແກ້ໄຂຂໍ້ຂັດແຍ່ງໃນການແບ່ງປັນມູນມໍລະດົກດັ່ງກ່າວ.

ໃນການແກ້ໄຂຂໍ້ຂັດແຍ່ງການແບ່ງປັນມູນມໍລະດົກລະຫວ່າງ ທ້າວ ວຽງຄຳ ແລະ ນາງ ອາລຸນ ນັ້ນ, ຄະນະ ສານແພ່ງຂອງສານຂັ້ນຕົ້ນນະຄອນຫລວງ, ຄະນະສານແພ່ງຂອງສານອຸທອນພາກກາງ ແລະ ຄະນະສານແພ່ງຂອງສານປະຊາຊົນສູງສຸດ ໄດ້ອີງໃສ່ກົດໝາຍວ່າດ້ວຍມູນມໍລະດົກ ແລະ ພື້ນຖານການສືບທອດມູນ ມໍລະດົກ ສະບັບເລກທີ 37/ປຫປທ, ລົງວັນທີ 27 ກໍລະກົດ 1990.

## 4. ການແກ້ໄຂບັນຫາທາງຂະບວນການຍຸຕິທຳ.

ພາຍຫລັງທີ່ຄະນະສານແພ່ງ, ສານປະຊາຊົນຂັ້ນຕົ້ນນະຄອນຫລວງວຽງຈັນ ໄດ້ຮັບຄຳຮ້ອງຟ້ອງຂໍແບ່ງປັນມູນມໍລະດົກລະຫວ່າງ ທ້າວ ວຽງຄຳ ແລະ ນາງ ອາລຸນ ແລ້ວ, ຄະນະສານແພ່ງຂັ້ນຕົ້ນກໍໄດ້ເຊີນພວກກ່ຽວ ມາໃຫ້ການ. ຊຶ່ງ ຄະນະສານແພ່ງຂອງສານຂັ້ນຕົ້ນນະຄອນຫລວງວຽງຈັນ ໄດ້ວິນິດໄສຄື:

- ເຫັນວ່າ ການທີ່ ທ້າວ ວຽງຄຳ ຮ້ອງຟ້ອງມາຍັງສານ. ເພື່ອຂໍແບ່ງປັນມູນມໍລະດົກຈາກ ນາງ ອາລຸນ ນັ້ນ, ເປັນການຮ້ອງຟ້ອງທີ່ມີເຫດຜົນບາງສ່ວນ, ດ້ວຍວ່າອີງຕາມຈົດໝາຍບັນທຶກຄຳໃຫ້ການຊ້ອງໜ້າສະບັບລົງວັນທີ 31 ພຶດສະພາ 2008 ແລະ ໃນທີ່ປະຊຸມສານ. ທັງສອງຝ່າຍກໍຮັບຮູ້ວ່າທີ່ດິນບ່ອນຂັດແຍ່ງກັນນີ້, ແມ່ນເປັນມູນຂອງ ນາງ ສົມໝາຍ ແລະ ທ້າວ ຄຳດີ (ຜົວເມຍ) ທີ່ຍັງບໍ່ທັນໄດ້ແບ່ງປັນກັນເທື່ອ, ມີແຕ່ໃຫ້ພວກລູກອາໄສຢູ່

- ສະນັ້ນ, ເມື່ອພິຈາລະນາຕາມ ມາດຕາ 06 ແລະ 16 ຂອງກົດໝາຍວ່າດ້ວຍມູນມໍລະດົກ ແລະ ພື້ນຖານການສືບທອດມູນມໍລະດົກແລ້ວ, ສານຈຶ່ງເຫັນຄວນນຳເອົາມູນມໍລະດົກຄືທີ່ດິນຢູ່ ບ້ານວັດຈັນ, ເມືອງ ຈັນທະບູລີ, ນະຄອນຫລວງວຽງຈັນ ມາແບ່ງປັນເປັນ 03 ພູດສະເໝີກັນ ແລ້ວມອບໃຫ້ ທ້າວ ວຽງຄຳ (ໂຈດ) 01 ພູດ, ອີກພູດໜຶ່ງມອບໃຫ້ ທ້າວ ວຽງແກ້ວ ແຕ່ໃນເມື່ອ ທ້າວ ວຽງແກ້ວ

ເສຍຊີວິດແລ້ວ ແມ່ນມອບໃຫ້ລູກຂອງທ້າວ ວຽງແກ້ວ ສືບທອດຕໍ່ໄປ. ສ່ວນອີກພູດໜຶ່ງແມ່ນມອບໃຫ້ ນາງ ວຽງໃໝ່ ແຕ່ ນາງ ວຽງໃໝ່ ໄດ້ໂຕນໜີໄປຕ່າງປະເທດ ຈຶ່ງເຫັນຄວນໃຫ້ລັດຄຸ້ມຄອງ.

ພາຍຫລັງການຕັດສິນຂອງສານປະຊາຊົນຂັ້ນຕົ້ນນະຄອນຫລວງ ຝ່າຍ ນາງ ອາລຸນ ແລະ ທ້າວ ທອງ (ຜົວ) ບໍ່ພໍໃຈຕໍ່ຄຳຕັດສິນຂອງສານຂັ້ນຕົ້ນ, ທ້າວ ທອງ (ນາມສົມມຸດ) (ຜົວຂອງ ນາງ ອາລຸນ) ຈຶ່ງຂຽນຄຳ ຮ້ອງຂໍອຸທອນ ສະບັບລົງ ວັນທີ 31 ກໍລະກົດ 2008 ເພື່ອຂໍອຸທອນ ໂດຍອ້າງເຫດຜົນວ່າ ທີ່ດິນຂໍ້ຂັດແຍ່ງດັ່ງກ່າວບໍ່ແມ່ນມູນຂອງ ທ້າວ ຄຳດີ ແລະ ນາງ ສົມໝາຍ ແຕ່ເປັນຂອງ ນາງ ໄກ່ (ເປັນບຸກຄົນທີສາມທີ່ຝ່າຍນາງອາລຸນ ແລະ ຜົວ ໄດ້ອ້າງຂຶ້ນມາເພື່ອຢາກໃຫ້ສານພິຈາລະນາວ່າ ຊັບສິນຊຶ່ງເປັນທີ່ດິນຕອນດັ່ງກ່າວບໍ່ແມ່ນມໍລະດົກທີ່ຕົກທອດມາຈາກ ພໍ່, ແມ່ຂອງຕົນ. ແຕ່ແມ່ນຊັບສົມບັດຂອງບຸກຄົນທີສາມດັ່ງກ່າວ). ຕາມໃບແຈ້ງກຳມະສິດ ທີ່ດິນ ແລະ ເຮືອນ ສະບັບ ລົງວັນທີ 2 ກໍລະກົດ 1983 ຊຶ່ງ ທ້າວ ວຽງແກ້ວ ເປັນຜູ້ຄຸ້ມຄອງ, ຮອດປີ 2008 ທ້າວ ວຽງຄຳ ໄດ້ມາທວງທາວ ຄືນນັ້ນ, ແມ່ນໝົດອາຍຸຄວາມແລ້ວ, ຈຶ່ງສະເໜີໃຫ້ສານພິຈາລະນາລົບລ້າງ.ຄຳຕັດສິນຖິ້ມແລ້ວໃຫ້ລູກຂອງ ທ້າວ ວຽງແກ້ວ ມີກຳມະສິດສືບທອດ ແລະ ໃຫ້ ທ້າວ ພອນປະເສີດ ແລະ ນາງ ສຳລານ (ລູກຊາຍ ແລະ ລູກໃພ້ຂອງ ທ້າວ ວຽງຄຳ) ຍົກຍ້າຍອອກຈາກທີ່ດິນຕອນດັ່ງກ່າວ.

ສານອຸທອນພາກກາງ ໄດ້ພິພາກສາດັ່ງນີ້:

- ພິພາກສາຍົກເລີກຄຳຮ້ອງຂໍອຸທອນ ຂອງ ທ້າວ ທອງ ຜູ້ຕາງໜ້າ ນາງ ອາລຸນ ຖິ້ມ ແລ້ວ ພິພາກສາຢັ້ງຢືນເອົາຕາມຄຳຕັດສິນ ສະບັບເລກທີ ................... ລົງວັນທີ 28 ກໍລະກົດ 2008 ຂອງສານປະຊາຊົນຂັ້ນ ຕົ້ນນະຄອນຫລວງທຸກຂໍ້ຄວາມ.

ແຕ່ ຝ່າຍ ນາງ ອາລຸນ ແລະ ທ້າວ ທອງ ກໍຍັງບໍ່ພໍໃຈຕໍ່ຄຳຕັດສິນຂອງສານຂັ້ນອຸທອນ ຈຶ່ງໄດ້ຍື່ນຄຳສະ ເໜີຂໍລົບລ້າງ ສະບັບລົງວັນທີ 1 ມິຖຸນາ 2009, ໂດຍມີຄຳຖະແຫຼງ ສະບັບເລກທີ ......../ອອປສ, ລົງວັນທີ 3 ສິງຫາ 2009 ຂອງໄອຍະການປະຊາຊົນສູງສຸດ.

ໂດຍສານປະຊາຊົນສູງສຸດໄດ້ພິພາກສາ ດັ່ງນີ້:

- ພິພາກສາຄະດີດັ່ງກ່າວເປັນຂັ້ນລົບລ້າງ ແລະ ເປັນຂັ້ນສຸດທ້າຍທາງດ້ານກົດໝາຍບອກວ່າ: ຍົກເລີກຄຳຮ້ອງຟ້ອງຂໍລົບລ້າງ ສະບັບເລກທີ 1 ມິຖຸນາ 2009 ຂອງ ນາງ ອາລຸນ ແລ້ວຢັ້ງຢືນເອົາຕາມຄຳພິພາກສາ ສະບັບເລກທີ .........../ອທ.ພກ ລົງວັນທີ 3 ກຸມພາ 2009 ຂອງສານອຸທອນພາກກາງທັງໝົດ.

## 5. ການວິເຄາະບັນຫາ.

ຄວາມຂັດແຍ່ງທີ່ເກີດຈາກການສະເໜີຂໍແບ່ງປັນມູນມໍລະດົກແມ່ນເກີດມາຈາກບັນຫາຕົ້ນຕໍດັ່ງນີ້:

- ພາຍຫລັງທີ່ ພໍ່ແມ່ ເສຍຊີວິດ ພວກລູກທັງສາມ ນາງ ວຽງໃໝ່, ທ້າວ ວຽງຄຳ ແລະ ທ້າວ ວຽງແກ້ວ ກໍຍັງບໍ່ທັນໄດ້ມີການແບ່ງປັນມູນມໍລະດົກມີແຕ່ນຳໃຊ້ຕະຫລອດມາ
- ຖ້າຫາກມີການແບ່ງປັນກັນທັນທີກໍອາດຈະບໍ່ເກີດມີຂໍ້ຂັດແຍ່ງທີ່ນຳມາເຖິງຜົນກະທົບດ້ານລົບຫລາຍຢ່າງທີ່ບໍ່ກະທົບສະເພາະແຕ່ສາຍພົວພັນຄອບຄົວເທົ່ານັ້ນ,ແຕ່ຍັງພົວພັນເຖິງສິດຜົນປະໂຫຍດຂອງ ຄອບຄົວນຳອີກ.
- ພາຍຫລັງ ທ້າວ ວຽງແກ້ວ ໄດ້ເສຍຊີວິດ ນາງ ອາລຸນ (ຜູ້ເປັນລູກສາວ) ກໍໄດ້ແຈ້ງກຳມະສິດທີ່ດິນ ແລະ ເຮືອນອອກຊື່ຕົນເອງຜູ້ດຽວ ຊຶ່ງການກະທຳດັ່ງກ່າວ ເຮັດໃຫ້ ທ້າວ ວຽງຄຳ ບໍ່ພໍໃຈ ແລະ ໄດ້ສະເໜີຂໍແບ່ງປັນມູນມໍລະດົກດັ່ງກ່າວຕາມລະບຽບກົດໝາຍ. ແຕ່ຝ່າຍ ນາງ ອາລຸນ ບໍ່ເຫັນດີທີ່ຈະໃຫ້ມີການແບ່ງປັນມູນໂດຍອ້າງວ່າໄດ້ກາຍກຳນົດເວລາຂອງອາຍຸຄວາມໃນການຮ້ອງຂໍແບ່ງປັນມູນມໍລະດົກແລ້ວຖ້າຫາກວ່າທັງສອງຝ່າຍ ເຄົາລົບ ແລະ ນັບຖືມູນມໍລະດົກຂອງບິດາມານດາປູ່ຍ່າຕາຍາຍໄດ້ຕົກທອດໃຫ້.ໃນຕອນໄກ່ເກ່ຍຢູ່ຂັ້ນບ້ານທັງສອງຝ່າຍຫາກຫັນໜ້າເຂົ້າຫາກັນ ແລະ ປະນີປະນອມຜ່ອນສັ້ນຜ່ອນຍາວນຳກັນສິ່ງທີ່ຕາມມາອາດຈະສ້າງໃຫ້ເກີດຜົນກະທົບທີ່ຍຸຕິທຳ ແລະ ມີປະໂຫຍດຕໍ່ສອງຝ່າຍຫລາຍກ່ວາທີ່ເປັນຢູ່ໃນປັດຈຸບັນ

## 6. ສະຫລຸບ.

ສະຫລຸບລວມແລ້ວ,ຜ່ານການສຶກສາຂໍ້ຂັດແຍ່ງທີ່ໄດ້ນຳສະເໜີມາຂ້າງເທິງນີ້ໄດ້ສະແດງໃຫ້ພວກເຮົາເຫັນໄດ້ບາງປັດໃຈພື້ນຖານໃນການດຳລົງຊີວິດນັ້ນກໍຄືຕ້ອງມີສະຕິລະມັດລະວັງໃນການເບິ່ງບັນຫາ ຫລື ເຄື່ອນໄຫວ ຢູ່ໃນສະພາບການໃດໜຶ່ງ. ຫລາຍໆບັນຫາ, ຫຼາຍເຫດການທີ່ພວກເຮົາປະສົບພົບພໍ້ຢູ່ພວກເຮົາບໍ່ຄວນເລີ່ນເລີ້ ຫລື ຖືເບົາກັບສິ່ງເຫຼົ່ານັ້ນ. ເພາະບາງຄັ້ງການດຳເນີນການໃດໜຶ່ງທີ່ຈະຮັບປະກັນໃຫ້ແນ່ນອນ ,ປອດໄພ, ຮັດກຸມນັ້ນ, ມັນຈະຮັບປະກັນດ້ານຜົນປະໂຫຍດທີ່ຄວນຈະໄດ້ຮັບຈາກມັນ.

ຄ້າຍຄືກັບເຫດການທີ່ໄດ້ເກີດຂຶ້ນກັບຄູ່ກໍລະນີທີ່ໄດ້ນຳສະເໜີຢູ່ໃນບົດກໍລະນີສຶກສາບົດນີ້.ເມື່ອສັງເກດເບິ່ງໃຫ້ລະອຽດແລ້ວ, ມັນແມ່ນຂໍ້ຂັດແຍ່ງກ່ຽວກັບທີ່ດິນທີ່ເກີດຂຶ້ນຈາກການສືບທອດ ແລະ ແບ່ງປັນມູນມໍລະດົກ ທີ່ອາດຈະພົບເຫັນຫຼາຍໃນສັງຄົມຂອງພວກເຮົາ.

ເຫັນໄດ້ວ່າໃນພື້ນຖານຄວາມເປັນຈິງ, ທັງສອງຝ່າຍແມ່ນເປັນຍາດພີ່ນ້ອງທີ່ໃກ້ຊິດ ແລະ ເຄີຍມີສາຍພົວພັນອັນສະໜິດແໜ້ນກັນມາກ່ອນ. ດ້ວຍຄວາມຮັກ ແລະ ໃກ້ຊິດສະໜິດສະໜົມ ເຮັດໃຫ້ເບື້ອງຕົ້ນທັງສາມອ້າຍນ້ອງ ຍັງຖືໃຈເບົາ ແລະ ບໍ່ໄດ້ຮີບຮ້ອນທີ່ຈະແບ່ງປັນມູນມໍລະດົກທີ່ພໍ່,ແມ່ໄດ້ຕົກທອດມາໃຫ້. ຈົນເວລາລ່ວງເລີຍຜ່ານໄປໃນທີ່ສຸດກໍນຳມາຊຶ່ງການເກີດຂໍ້ຂັດແຍ່ງທີ່ຫລາຍຝ່າຍອາດຈະບໍ່ໄດ້ຄາດຄິດໄວ້ມາກ່ອນ ນັ້ນກໍ່ຄື ມີຂໍ້ຂັດແຍ່ງທີ່ເກີດຂຶ້ນກັບສາຍພົວພັນຍາດພີ່ນ້ອງຂອງພວກກ່ຽວ, ໂດຍທີ່ຝ່າຍ ນາງ ອາລຸນ ຫລານສາວຂອງ ທ້າວ ວຽງຄຳ ມີຄວາມຈິງໃຈທີ່ຈະແບ່ງປັນມູນມໍລະດົກທີ່ຕົກທອດມາຈາກປູ່ຍ່າຕາຍາຍໃຫ້ຍາດພີ່ນ້ອງຜູ້ທີ່ມີສິດສືບທອດຕາມກົດໝາຍ. ຢາກຄອບຄອງນຳໃຊ້ ແລະ ເປັນເຈົ້າຂອງສິດນຳໃຊ້ທີ່ດິນແຕ່ພຽງຜູ້ດຽວ, ສະແດງອອກດ້ວຍການບອກໄລ່ຄອບຄົວນາງ ສຳລານ (ລູກສາວ ຂອງທ້າວ ວຽງແກ້ວ) ໃຫ້

ຍົກຍ້າຍອອກຈາກທີ່ດິນຕອນດັ່ງກ່າວ.ອ້າງວ່າ ຕົນເປັນເຈົ້າຂອງສິດນຳໃຊ້ພຽງຜູ້ດຽວ ແລະ ກໍພະຍາຍາມຫາທຸກວິທີທາງເພື່ອຈະໄປແຈ້ງກຳມະສິດທີ່ດິນ ແລະ ເຮືອນເພື່ອອອກເປັນຊື່ຂອງຕົນພຽງຜູ້ດຽວ ຊຶ່ງມັນເປັນການກະທຳທີ່ຜິດກັບລະບຽບກົດໝາຍຂອງບ້ານເມືອງ ແລະ ຂັດກັບຮີດຄອງປະເພນີອັນດີງາມຂອງລາວເຮົາຄ້າຍຄືກັບຄວາມພະຍາຍາມທີ່ຈະເອົາຂອງຄົນອື່ນມາເປັນຂອງຕົນ ຊຶ່ງສຸດທ້າຍແລ້ວຄວາມພະຍາຍາມອັນບໍ່ຊອບຂອງ ນາງ ອາລຸນ ກໍບໍ່ບັນລຸຜົນ, ແຕ່ມັນໄດ້ເປັນສາເຫດພາໃຫ້ຂໍ້ຂັດແຍ່ງຂອງສາຍຍາດໄດ້ເກີດຂຶ້ນ.

ສິ່ງເຫຼົ່ານີ້ມັນໄດ້ກາຍເປັນຂີດໝາຍຂອງສາຍພົວພັນຄອບຄົວຂອງທັງສອງຝ່າຍທີ່ກຳລັງຈະຄ່ອຍໆສິ້ນສຸດລົງເທື່ອລະກ້າວ ແລະ ຖືກແທນທີ່ດ້ວຍຄວາມອາຄາດບາດໝາງໂກດແຄ້ນແໜ້ນໃຈຕໍ່ກັນຊຶ່ງມັນບໍ່ແມ່ນຜົນກະທົບອັນດີຕໍ່ທັງສອງຝ່າຍ.ແຕ່ມັນໄດ້ກໍ່ໃຫ້ເກີດຜົນກະທົບດ້ານລົບຂຶ້ນຫລາຍຢ່າງລວມໄປເຖິງການສູນເສັຍທີ່ດິນຊຶ່ງເປັນມູນມໍລະດົກບາງສ່ວນເຮັດໃຫ້ບ່ອນທີ່ໃຊ້ເປັນທີ່ຕັ້ງຖິ່ນຖານພູມລຳເນົາເພື່ອດຳລົງຊີວິດ ແລະທຳມາຫາກິນຖືກຈຳກັດເນື້ອທີ່ໃຫ້ແຄບເຂົ້າ,ການເຄື່ອງໄຫວດຳລົງຊີວິດທີ່ອາດບໍ່ສະດວກສະບາຍບໍ່ວ່າຈະເປັນດ້ານຈິດໃຈ ແລະ ດ້ານການປະພຶດ ແລະ ບັນຫາອື່ນໆຊຶ່ງມີຄວາມອາດສາມາດກາຍເປັນປະກົດການຫຍໍ້ທໍ້ອີກດ້ານໜຶ່ງໃຫ້ແກ່ສັງຄົມ.

## 7. ຄຳແນະນຳ, ຂໍ້ສະເໜີ.

- ໃນການສືບທອດມູນມໍລະດົກ.ພາຍຫລັງທີ່ເຈົ້າມູນໄດ້ເສຍຊີວິດຜູ້ທີ່ມີສິດສືບທອດມູນມໍລະດົກຄວນຈະຮີບຮ້ອນແບ່ງປັນມູນມໍລະດົກດັ່ງກ່າວ,ເພື່ອຮັບປະກັນສິດຜົນປະໂຫຍດຂອງແຕ່ລະຝ່າຍທີ່ໄດ້ຮັບສິດສືບທອດດັ່ງກ່າວ ແລະ ຫລີກເວັ້ນບັນຫາຫຍຸ້ງຍາກສັບສົນທີ່ອາດຈະເກີດຂຶ້ນໃນອານາຄົດ.ໂດຍສະເພາະມູນມໍລະດົກທີ່ຕິດພັນກັບທີ່ດິນຍິ່ງມີຄວາມຈຳເປັນທີ່ຈະຕ້ອງໄດ້ມີຄວາມຮອບຄອບ, ເອົາໃຈໃສ່ ແລະ ເປັນ ສິ່ງທີ່ບໍ່ຄວນຖືເບົາ. ເນື່ອງຈາກສະພາບເສດຖະກິດ-ສັງຄົມໃນປັດຈຸບັນທີ່ດິນແມ່ນຊັບສົມບັດທີ່ທຸກໆຄົນ,ລ້ວນແລ້ວແຕ່ປາຖະໜາຢາກໄດ້ເປັນຂອງຕົນເອງໃຫ້ຫລາຍເທົ່າທີ່ຈະເປັນໄປໄດ້. ເພາະໃນສະພາບການຕົວຈິງຍ້ອນມີຫລາຍຄົນທີ່ຖືເບົາຕໍ່ກັບທີ່ດິນທີ່ຕົນມີສິດເປັນເຈົ້າຂອງສິດນຳໃຊ້ ຈຶ່ງພາໃຫ້ເກີດບັນຫາຫຍຸ້ງຍາກສັບສົນ ແລະ ພາໃຫ້ເກີດປະກົດການຫຍໍ້ທໍ້ຫລາຍໆຢ່າງຢູ່ໃນສັງຄົມຂອງປະເທດເຮົາ
- ໃນກໍລະນີການແບ່ງປັນມູນມໍລະດົກ.ຫາກບໍ່ສາມາດຈະທຳການແບ່ງປັນໄດ້ທັນທີທີ່ເຈົ້າມູນໄດ້ເສຍຊີວິດຊຶ່ງອາດເປັນຍ້ອນເງື່ອນໄຂ ຫລື ສະພາບຄວາມເປັນຈິງບາງດ້ານນັ້ນ, ຜູ້ທີ່ມີສິດສືບທອດມູນມໍລະດົກກໍຕ້ອງມີຄວາມສັດຊື່ບໍລິສຸດໃຈ, ຮູ້ຈັກເຄົາລົບສິດ ແລະ ພັນທະຂອງຕົນເອງແລະ ຂອງຝ່າຍອື່ນທີ່ມີສິດສືບທອດມູນມໍລະດົກ, ບໍ່ເຫັນແກ່ຜົນປະໂຫຍດສ່ວນຕົວຂອງຕົນເອງຈົນເຮັດໃຫ້ເກີດມີຄວາມໂລບຊຶ່ງອາດເປັນສາເຫດນຳມາສູ່ການເກີດຂໍ້ຂັດແຍ່ງກ່ຽວກັບການແບ່ງປັນມູນມໍລະດົກ ທີ່ຈະບໍ່ເປັນຜົນດີແກ່ທຸກໆຝ່າຍ
- ໃນກໍລະນີເກີດມີຂໍ້ຂັດແຍ່ງທີ່ບໍ່ອາດສາມາດຈະຫລີກຫລ່ຽງໄດ້ແຕ່ລະຝ່າຍກໍຕ້ອງໄດ້ພະຍາຍາມຫັນໜ້າ ເຂົ້າຫາກັນ. ເພື່ອເຈລະຈາປຶກສາຫາລື ໄກ່ເກ່ຍບັນຫາທີ່ເປັນຂໍ້ຂັດແຍ່ງນຳກັນ, ເພື່ອຊອກຫາວິທີທາງທີ່ຈະ ປະນີປະນອມກັນໄດ້. ໝາຍຄວາມວ່າ ຊອກຫາວິທີທາງອອກ ຫລື ແນວທາງແກ້ໄຂ,ເພື່ອໃຫ້ໄດ້ມາຊຶ່ງຄວາມເປັນທຳ ແລະ ມີປະໂຫຍດທີ່ສຸດໃຫ້ແກ່ແຕ່ລະຝ່າຍ. ແຕ່ກ່ຽວກັບບັນຫາການສືບທອດ ແລະ ການແບ່ງປັນມູນມໍລະດົກແລ້ວ,ທຸກຝ່າຍຕ້ອງໄດ້ໃຫ້ຄວາມເຄົາລົບ

ນັບຖືບຸນຄຸນຂອງບັນພະບູລຸດຂອງຄອບຄົວທີ່ໄດ້ທຸ້ມເທສະຕິປັນຍາ,ອອກເຫື່ອເທແຮງເພື່ອລ້ຽງດູລູກເຕົ້າ ແລະ ຊອກຫາຊັບສິນມູນມໍລະດົກມາໃຫ້ແກ່ພວກຕົນ, ເພື່ອຈະເຮັດໃຫ້ຈິດໃຈທີ່ກຳລັງເຕັມໄປດ້ວຍຄວາມອາຄາດ, ອິດສາລິດສະຫຍາ, ໂກດແຄ້ນ, ຊີງດີຊີງເດັ່ນມາທຳລາຍມິດຕະພາບຂອງສາຍຍາດຄອບຄົວອັນແໜ້ນແຟ້ນໄດ້.ເຮັດແນວໃດຫລີກເວັ້ນບໍ່ໃຫ້ວັດຖຸເຂົ້າມາມີອິດທິພົນຄອບງຳຈິດໃຈຂອງຕົນເພາະຖ້າບໍ່ສາມາດຈະເຈລະຈາປະນີປະນອມກັນໄດ້ແລ້ວກໍຈຳເປັນຈະຕ້ອງໄດ້ນຳໄປແກ້ໄຂໂດຍຜ່ານຂະບວນການຍຸຕິທຳຊຶ່ງຜົນໄດ້ຮັບບາງຄັ້ງກໍ່ເຮັດໃຫ້ເສຍສິດຜົນປະໂຫຍດອັນລ້ຳຄ່າທີ່ຕົນຄວນຈະໄດ້ຮັບໄປຄືດັ່ງເຫດການທີ່ໄດ້ເກີດຂຶ້ນກັບແຕ່ລະຝ່າຍຢູ່ໃນບົດກໍລະນີສຶກສາທີ່ໄດ້ກ່າວມາຂ້າເທິງນັ້ນ

- ສັງລວມແລ້ວເຫັນວ່າປະຊາຊົນພວກເຮົາແມ່ນມີຄວາມຈຳເປັນຈະຕ້ອງໄດ້ຮັບການສຶກສາອົບຮົມໃນຫລາຍໆດ້ານ. ບໍ່ວ່າຈະເປັນດ້ານການສຶກສາ-ວັດທະນະທຳ, ຮີດຄອງປະເພນີ, ສິນທຳປະຈຳໃຈ ແລະ ອື່ນໆ, ແຕ່ສິ່ງສຳຄັນທີ່ສຸດແມ່ນກ່ຽວກັບການຮຽນຮູ້ ແລະ ເຂົ້າໃຈແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດ ໝາຍຂອງລັດ. ເພື່ອເຮັດໃຫ້ການເຄື່ອນໄຫວດຳລົງຊີວິດຂອງຕົນ ຖືກຕ້ອງສອດຄ່ອງກັບແນວທາງ ແລະ ລະບຽບກົດໝາຍ, ປະກອບສ່ວນເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ຍຸຕິທຳ. ເພາະທີ່ຜ່ານມາການສຶກສາອົບຮົມໃຫ້ປະຊາຊົນເຂົ້າໃຈກ່ຽວກັບແນວທາງນະໂຍບາຍຂອງພັກ,ລະບຽບກົດໝາຍຂອງລັດໂດຍສະເພາະບັນຫາທີ່ຕິດພັນກັບທີ່ດິນຍັງບໍ່ຕອບສະໜອງໄດ້ກັບສະພາບຄວາມຮຽກຮ້ອງຕ້ອງການຕົວຈິງຂອງສັງຄົມ ຈຶ່ງເຮັດໃຫ້ຍັງມີປະຊາຊົນຈຳນວນຫຼາຍບໍ່ເຂົ້າໃຈ, ບໍ່ຮູ້ລະບຽບກົດໝາຍ, ມີການລະເມີດລະ ບຽບກົດໝາຍ, ສ້າງບັນຫາຫຍຸ້ງຍາກໃນການພັດທະນາເສດຖະກິດ-ສັງຄົມ.

## ຄຳຖາມ.

ກໍລະນີສຶກສາກ່ຽວກັບຂໍ້ຂັດແຍ່ງທີ່ດິນທີ່ມີລັກສະນະທາງແພ່ງທີ່ໄດ້ຍົກຂຶ້ນມາສະເໜີ.ແມ່ນໄດ້ມີການແກ້ໄຂໂດຍຜ່ານຂະບວນການຍຸຕິທຳແລ້ວ.ເຖິງແນວໃດກໍຕາມກໍຍັງມີຫລາຍໆຈຸດທີ່ໜ້າສົນໃຈໂດຍສະເພາະ.ແມ່ນພາຍຫລັງການຕັດສິນຂອງພາກສ່ວນທີ່ກ່ຽວຂ້ອງແລ້ວຈະມີຜົນກະທົບດ້ານໃດແດ່ເກີດຂຶ້ນກັບແຕ່ລະຝ່າຍ. ດັ່ງນັ້ນ, ຜູ້ຂຽນຈຶ່ງໄດ້ຕັ້ງຄຳຖາມເຈາະຈີ້ມຈຳນວນໜຶ່ງຂຶ້ນມາເພື່ອເປັນການແລກປ່ຽນຄຳຄິດຄຳເຫັນ,ເຮັດໃຫ້ຜູ້ອ່ານໄດ້ຄົ້ນຄິດກ່ຽວກັບຂໍ້ຂັດແຍ່ງທີ່ເກີດຂຶ້ນ,ການແກ້ໄຂບັນຫາດັ່ງກ່າວມີຄວາມແທດເໝາະຄືແນວໃດ ແລະ ຈະມີຜົນກະທົບແກ່ຄູ່ກໍລະນີແຕ່ລະຝ່າຍຄືແນວໃດ.ຊຶ່ງລາຍລະອຽດຂອງແຕ່ລະຄຳຖາມມີດັ່ງລຸ່ມນີ້:

1. ພາຍຫລັງທີ່ຂໍ້ຂັດແຍ່ງໄດ້ຖືກແກ້ໄຂໄປແລ້ວໂດຍຜ່ານຂະບວນການຍຸຕິທຳຊຶ່ງມີຄຳພິພາກສາຂອງສານປະຊາຊົນສູງສຸດເປັນຂັ້ນລົບລ້າງ ແລະ ສຸດທ້າຍໂດຍແບ່ງທີ່ດິນອອກເປັນ ສາມ ພູດນັ້ນຈະຮັບປະກັນໄດ້ຫລາຍໜ້ອຍພຽງໃດ ວ່າ ຂໍ້ຂັດແຍ່ງຈະສິ້ນສຸດລົງດ້ວຍດີ?

2. ອີງຕາມລະບຽບກົດໝາຍ. ສານໄດ້ຕັດສິນແບ່ງທີ່ດິນອອກເປັນ ສາມ ພູດ ໂດຍໜຶ່ງພູດມອບ ໃຫ້ລັດຄຸ້ມຄອງ, ການແກ້ໄຂລັກສະນະນີ້. ຝ່າຍຄູ່ກໍລະນີຈະຮູ້ສຶກແບບໃດ? ຈະມີຜົນກະທົບຕໍ່ການດຳລົງຊີວິດ ແລະ ຢູ່ອາໄສຂອງພວກເຂົາເຈົ້າໜ້ອຍຫລາຍພຽງໃດ ເພາະ ຂອບເຂດທີ່ດິນຖືກຈຳກັດ, ເນື້ອທີ່ແຄບລົງ.

3. ພາຍຫລັງການພິພາກສາຂອງສານໃຫ້ແບ່ງທີ່ດິນອອກເປັນອອກເປັນ ສາມພູດ ໂດຍໃນນັ້ນ, ໜຶ່ງພູດແມ່ນມອບໃຫ້ລັດເປັນຜູ້ຄຸ້ມຄອງນັ້ນ. ຄອບຄົວ ຂອງ ທ້າວ ວຽງຄໍາ ແລະ ຄອບຄົວຂອງ ນາງ ອາລຸນຈະບໍ່ຮູ້ສຶກວ່າ ຕົນເອງຖືກເອົາປຽບຈາກລັດຫລືບໍ່? ເພາະທີ່ດິນທີ່ຖືກລັດຄຸ້ມຄອງໃນຄວາມເປັນຈິງກໍແມ່ນມູນມໍລະດົກຂອງຜູ້ເປັນພໍ່ ແລະ ແມ່ຂອງເຂົາເຈົ້າ. ເຖິງວ່າ ລະບຽບກົດໝາຍຈະກໍານົດໄວ້ກ່ຽວກັບບັນຫາດັ່ງກ່າວ,ແຕ່ທຽບກັບລະດັບຄວາມຮູ້ຄວາມເຂົ້າໃຈຂອງເຂົາເຈົ້າຈະເຮັດໃຫ້ເຂົາເຈົ້າເຫັນໄດ້ເຖິງຄວາມຍຸຕິທໍາຫລືບໍ່?

4. ທີ່ດິນທີ່ຖືກລັດຄຸ້ມຄອງໃນຕໍ່ໜ້າລັດອາດຈະມີນະໂຍບາຍມອບໃຫ້ບຸກຄົນ ຫລື ນິຕິບຸກຄົນໃດໜຶ່ງມານໍາໃຊ້, ຄຸ້ມຄອງ ແລະ ປົກປັກຮັກສາດ້ວຍການໃຫ້ສິດໃຊ້ ຫລື ໃຫ້ເຊົ່ານັ້ນ, ຄອບຄົວຂອງຄູ່ກໍລະນີຈະບໍ່ເກີດມີທັດສະນະເຂົ້າໃຈຜິດຕໍ່ແນວທາງນະໂຍບາຍຂອງພັກ-ລັດບໍ່.ເພາະເຂົາເຈົ້າອາດຄິດຢູ່ຕະຫລອດເວລາວ່ານັ້ນແມ່ນທີ່ດິນທີ່ເຄີຍເປັນມູນມໍລະດົກຂອງພໍ່ແມ່ຕົນເອງ,ແຕ່ກໍາລັງຖືກຝ່າຍອື່ນນໍາໃຊ້ ແລະ ໄດຮັບຜົນປະໂຫຍດ. ພ້ອມກັນນີ້,ຈະບໍ່ເກີດບັນຫາຫຍຸ້ງຍາກສັບສົນຕໍ່ສາຍພົວພັນສັງຄົມລະຫວ່າງສອງຄອບຄົວດັ່ງກ່າວກັບບຸກຄົນ ຫລື ນິຕິບຸກຄົນທີ່ເຂົ້າມານໍາໃຊ້ນັ້ນບໍ່?

## ຂໍ້ມູນອ້າງອີງ.

1. ສັງລວມບັນດາຂໍ້ມູນເອກະສານທີ່ກ່ຽວກັບຂໍ້ຂັດແຍ່ງກ່ຽວກັບການຂໍແບ່ງປັນມູນມໍລະດົກລະ ຫວ່າງ ທ້າວ ວຽງຄໍາ (ນາມສົມສຸດ) ແລະ ນາງ ອາລຸນ (ນາມສົມມຸດ).

2. ຄໍາຕັດສິນ ແລະ ຄໍາພິພາກສາຂອງຄະນະສານແພ່ງ, ແຕ່ຂັ້ນຕົ້ນ ຈົນເຖິງຂັ້ນສູງສຸດ.

3. ຊື່ຂອງບຸກຄົນ, ສະຖານທີ່ ແລະ ເນື້ອທີ່ດິນທີ່ໄດ້ຍົກຂຶ້ນໃນກໍລະນີສຶກສາບົດນີ້ເປັນພຽງນາມ ແລະ ຕົວເລກສົມມຸດເທົ່ານັ້ນ.

4. ວັນເວລາທີ່ຍົກຂຶ້ນໃນກໍລະນີສຶກສາບົດນີ້, ແມ່ນການສົມມຸດຂຶ້ນເທົ່ານັ້ນ.

Rights-LINK

# ໂຄງການເຄືອຂ່າຍຂໍ້ມູນທີ່ດິນ ແລະ ຊັບພະຍາກອນທຳມະຊາດ

## *ເປົ້າໝາຍຂອງໂຄງການ*

ເພີ່ມທະວີການນຳໃຊ້ ແລະ ຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ ຢູ່ໃນ ສປປ ລາວ ໃຫ້ຍືນຍົງ ໂດຍການສົ່ງເສີມການເຂົ້າເຖິງຂໍ້ມູນຂ່າວສານ, ສົ່ງເສີມການມີສ່ວນຮ່ວມ ແລະ ຍົກລະດັບຄວາມສາມາດໃຫ້ແກ່ຄູ່ຮ່ວມງານ.

## *ຈຸດປະສົງຂອງໂຄງການ*

ເພື່ອສົ່ງເສີມທຸກພາກສ່ວນທີ່ກ່ຽວຂ້ອງໃຫ້ມີຄວາມຮັບຮູ້, ຄວາມສາມາດ ແລະ ມີສ່ວນຮ່ວມໃນການປຶກສາ ຫາລືກ່ຽວກັບຂໍ້ມູນຂ່າວສານທີ່ດິນ ແລະ ຊັບພະຍາກອນທຳມະຊາດ ເພື່ອໃຫ້ປະຊາຊົນໃນທ້ອງຖິ່ນສາມາດເຂົ້າໃຈໄດ້ ກ່ຽວກັບສິດໃນການນຳໃຊ້ ແລະ ຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ.

## *ໂຄງການດຳເນີນງານໂດຍອີງຕາມຫຼັກການດັ່ງຕໍ່ລົງໄປນີ້*

- ຄວາມເປັນເຈົ້າການຂອງຄົນລາວ
- ການຍອມຮັບຂໍ້ຕົກລົງວ່າດ້ວຍບົດບາດຍິງ-ຊາຍ ກ່ຽວກັບປະເດັນທີ່ດິນ
- ການຍອມຮັບຂໍ້ຕົກລົງວ່າດ້ວຍຄວາມເປັນຊົນຊາດຊົນເຜົ່າ ແລະ ປະເພນີ ວັດທະນະທຳທ້ອງຖິ່ນ
- ຄວາມເປັນກາງ
- ການເຂົ້າເຖິງຂໍ້ມູນຂ່າວສານຢ່າງເປີດກວ້າງ
- ເຮັດໃຫ້ມີຄວາມຫຼາກຫຼາຍ
- ການມີສ່ວນຮ່ວມ

ໂຄງການເຄືອຂ່າຍຂໍ້ມູນທີ່ດິນ ແລະ
ຊັບພະຍາກອນທຳມະຊາດ
ອົງການບ້ານຈຸດສຸມສາກົນ
ຕູ້ ປ.ນ. 4697
ນະຄອນຫຼວງວຽງຈັນ, ສປປ ລາວ
+856 (0)21 312519

ອີແມວ: info@rightslinklao.org
www.rightslinklao.org